# ກ່ຽວກັບ ບໍລິສັດ ແອັກວາຍຊ໌ ມືຖື ຈຳກັດ

ແອັກວາຍຊ໌ ມືຖື ຈຳກັດ (XY Mobile) ເປັນບໍລິສັດຫຸ້ນສ່ວນລະຫວ່າງ ບໍລິສັດ ຊ້າງດາວທີ່ປຶກສາ (Xangdao) ລາວ ຈຳກັດຜູ້ດຽວ ແລະ ບໍລິສັດ ໂຍໂຊ (Yozzo) ໄທ ຈຳກັດຜູ້ດຽວ

**ຊື່ບໍລິສັດ**: ແອັກວາຍຊ໌ ມືຖືລາວ ຈຳກັດຜູ້ດຽວ (XY Mobile Excellent Product and Services)

**ສະຖານະ**: ບໍລິສັດຜູ້ດຽວ

**ສະຖານທີ່ການລົງທະບຽນ**: ນະຄອນຫຼວງວຽງຈັນ, ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

**ກໍ່ຕັ້ງ**: ກັນຍາ 2010

## *ໂລໂກ້ຂອງເຮົາ*

ໂລໂກ້ແອັກວາຍຊ໌ ແລະ ຊື່ ເປັນຊື່ຫຍໍ້ມາຈາກທັງສອງບໍລິສັດທີ່ລົງທຶນຮ່ວມກັນ.

ແອັກ (X) ຄືຈາກບໍລິສັດ ຊ້າງດາວທີ່ປຶກສາ (Xangdao) ແລະ ວາຍຊ໌ (Y) ຄືຈາກບໍລິສັດ ໂຍໂຊ Yozzo, X ເຮັດໜ້າທີ່ມາຈາກສອງພະຍັນ ຊະນະລວມເຂົ້າດ້ວຍກັນ, ສັນຍາລັກສີຟ້າແລະສີແດງມາຈາກທຸງຊາດລາວ.

## ແອັກວາຍຊ໌ມືຖື (XY Mobile) ແມ່ນຫຍັງ?

ແອັກວາຍຊ໌ ມືຖື (XY Mobile) ເປັນຜູ້ໃຫ້ບໍລິການການແກ້ໄຂບັນຫາການສື່ສານແບບຄົບວົງຈອນ. ເຮົາໃຫ້ບໍລິການອຸປະກອນຮາດແວຊ໌, ຊອບສ໌ແວຊ໌ ແລະ ຄວາມຫລາກຫລາຍຂອງການບໍລິການເນື້ອຫາທີ່ຊ່ວຍໃຫ້ການຕິດຕໍ່ສະດວກຂຶ້ນ.

ເປົ້າໝາຍຫລັກຂອງເຮົາແມ່ນໃຫ້ເທັກໂນໂລຊີທີ່ມີຄຸນນະພາບສູງ ລາຄາບໍ່ແພງ ເຮົານໍາສະເໜີໂທລະສັບມືຖືທີ່ລາຄາຕໍ່າ ແລະອຸປະກອນລະດັບຄຸນນະພາບສູງຄື Android smartphones and tablets.

ຜ່ານການຮ່ວມກັນຂອງແພັກ ຟອມເທັກໂນໂລຊີທີ່ມີຄຸນລັກສະນະຫລາກຫລາຍຂອງໂທລະສັບມືຖືແລະອຸປະກອນການແກ້ບັນຫາການສື່ສານ, ແອັກວາຍຊ໌ມືຖື ສ້າງພື້ນທີໃໝ່ຂອງຜະລິດຕະພັນແລະບໍລິການທີຕອບສະໜອງຄວາມຕ້ອງການຂອງຄູ່ຄ້າ, ລູກຄ້າ ແລະ ໃນກຸ່ມຜູ້ບໍລິໂພກທຸກກຸ່ມ.

ສາຍການຜະລິດຕະພັນຂອງແອັກວາຍຊ໌ມືຖືຈະລວມເທັກໂນໂລຊີທີ່ມີປະສິດທິພາບແຕ່ລາຄາບໍ່ແພງກັບການປະຍຸກໃຊ້ນະວັດຕະກໍາທີ່ໃຫ້ປະສົບການທີ່ບໍ່ຊໍ້າກັນສໍາລັບຜູ້ໃຊ້ຂັ້ນສຸດທ້າຍ ເປັນໂອກາດທາງທຸລະກິດທີ່ໝັ້ນຄົງສໍາລັບຫຸ້ນສ່ວນ ແລະ ລູກຄ້າຂອງເຮົາ.

## ແມ່ນຫຍັງທີ່ ແອັກວາຍຊ໌ມືຖືເອົາໃຈໃສ່?

ຄິດຄົ້ນ, ປັບປຸງ, ສ້າງ ແລະ ສໍາລວດຄວາມຄິດໃໝ່ແລະໂອກາດເພື່ອທີ່ຈະໃຫ້ຜະລິດຕະພັນມີຄຸນນະພາບ ແລະ ນະວັດຕະກໍາສູງ ແລະ ການບໍລິການໃຫ້ກັບຄູ່ຄ້າຕົວແທນຈໍາໜ່າຍຂອງເຮົາແລະຜູ້ໃຊ້ທີ່ຈະກາຍເປັນນັກພັດທະນານະວັດຕະກໍາຊັ້ນນໍາແລະເປັນຜູ້ຈັດຈໍາໜ່າຍອຸປະກອນສື່ສານໃຫ້ເຄື່ອນທີ່ແລະບໍລິການໃນຕະຫລາດທີ່ເກີດໃໝ່ ຊ່ວຍໃຫ້ກາຍເປັນເຄື່ອງມທເຊື່ອມຕໍ່ໂດຍການຊ່ວຍເປີດໃຫ້ເຂົ້າເຖິງການບໍລິການຜ່ານທາງໂທລະສັບມືຖື ແລະ ບໍລິການໃນຕະຫຼາດ ເກີດໄໝ່.

ຈະຊ່ວຍເປັນຂວາຕໍ່ທີ່ດີຈິຕໍແບ່ງ ໂດຍການເປີດໃຫ້ເຂົ້າເຖິງພ່ານມືຖື ແລະ ບໍລິການ.

## ຄົນທີ່ຢູ່ເບື້ອງຫລັງແອັກວາຍຊ໌ມືຖື (XY Mobile)



ທ່ານອານຸສັກ ແອນໂທນີ ສຸຜາວັນ (Souphavanh  Anthony Anousak) ຜູ້ອໍານວຍການແລະຜູ້ຮ່ວມກໍ່ຕັ້ງແອັກວາຍຊ໌ມືຖື

ທ່ານອານຸສັກ ມີຈາກປະສົບການກວ່າ 14 ປີຈາກ IBM ແລະ ໂຄງການພັດທະນາແຫ່ງສະຫະປະຊາຊາດພ້ອມດ້ວຍບໍລິການໃຫ້ຄໍາປຶກສາຕ່າງໆລະດັບສາກົນ, ໜ່ວຍງານພາກລັດແລະອົງກອນລະຫວ່າງປະເທດ /.

ທ່ານອານຸສັກ ຮຽນຈົບປະລິນຍາຕີ ແລະ ປະລິນຍາໂທດ້ານວິທະຍາສາດຄອມພິວເຕີຈາກໂຮງຮຽນມະຫາວິທະຍາໄລ State University of New York Binghamton Watson ໃນ New York, USA ແລະ ມະຫາວິທະຍາໄລ Rochester Institue of Technology (RIT), Rochester, New York.

**ຈຸດພິເສດ:**

ການພັດທະນາຊອບແວຊ໌ລາວ, ເນື້ອຫາໂທລະສັບມືຖື ແລະ ເຄື່ອຂ່າຍ, ການແກ້ບັນລະບົບຫາທາງທຸລະກິດ: Open Source ERP/CRM, E-health, ມາດຕະຖານການຈັດການລະບົບການເງິນ, ການໃຊ້ງານລະບົບ SME ແລະ ລະບົບ GIS ການບໍລິການຂອງໂຄງການພັດທະນຊອບແວຊ໌, ເນື້ອຫາແລການຈັດການຄວາມຮູ້, ນະໂຍບາຍຂອງລັດຖະບານດ້ານ ICT, ເປີດແຫລ່ງທີ່ເປັນມາດຕະຖານດ້ານປະລິນຍາໂທ ແລະ ການວາງແຜນ.

ທ່ານ ອານຸສັກ ເປັນຄົນລາວ/ອາເມລິກາ, ໃຊ້ຊີວິດຢູ່ປະເທດລາວ ແລະ ທ່ານຍັງເປັນອໍານວຍການບໍລິສັດຊ້າງດາວທີ່ປຶກສາ ທີ່ໃຫ້ບໍລິການໃນປະເທດລາວ.



ແອແລນ ຣັດຊ໌ມູເຊັນ Allan Rasmussen

ຜູ້ຮ່ວມກໍ່ຕັ້ງ ແລະ ຮອງອໍານວຍການບໍລິສັດແອັກວາຍຊ໌ມືຖື

ແອແລນ ຣັດຊ໌ມູເຊັນ Allan Rasmussen ເປັນຜູ້ປະກອບການແລະຜູ້ບໍລິຫານທີ່ມີປະສົບການການພິສູດຄວາມເປັນຜູ້ນໍາໃນການສ້າງທຸລະກິດໃໝ່ທີ່ກ່ຽວຂ້ອງກັບອິນເຕີເນັດເທິງມືຖືຜ່ານສື່ສັງຄົມ, ໂທລະສັບມືຖືແລະໂທລະພາບ

ແອແລນ ຣັດຊ໌ມູເຊັນ Allan Rasmussen ມີປະສົບການຫລາຍກວ່າ 17 ປີໃນການວາງແຜນທຸລະກິດໃນເຊີງກົນລະຍຸດ, ການບໍລິການຈັດການ P&L, ການຕະຫລາດແລະພັດທະນາທຸລະກິດການຄ້າ ຮ່ວມກັບທັກສະນະດ້ານເທັກໂນໂລຊີທີ່ທັນສະໃໝ.

**ຈຸດພິເສດ:**

ມີລະດັບ 1, ຂອງ OEM ແລະ CP: ຂໍ້ກໍານົດກົນລະຍຸດການເຈລະຈາຕໍ່ລອງຈັດການທິດທາງແລະການດໍາເນີນການ

ມີຄຸນສົມບັດຢ່າງກວ້າງຂວາງໃນໂທລະຄົມ, ໂທລະພາບ ແລະ ອິນເຕີເນັດ.

ບໍລິການ Mobile VAS, ເວັບເທິງມືຖື, ທາງດ້ານ MVNO, ອຸປະກອນມືຖື ແລະ ທິດທາງພຶດຕິກໍາຂອງຜູ້ໃຊ້ໃນພູມພາກ ເອເຊຍປາຊີຟິກ (APAC).

ມີຄວາມຊໍານານໃນການສື່ສານດ້ານວັດທະນະທໍາຂ້າທະວີບ ແລະ ຝ່າຍປະສານງານລະຫວ່າງປະເທດ.

ທ່ານ ແອແລນ ຣັດຊ໌ມູເຊັນ ເກີດໃນປະເທດເດັນມາກແຕ່ອາໄສຢູ່ກຸງເທບ, ປະເທດໄທ. ແອແລນ ຣັດຊ໌ມູເຊັນ ຍັງເປັນຜູ້ອໍານວຍການຂອງ ບໍລິສັດໂຢໂຊ (Yozzo) ຈໍາກັດ ເຊິ່ງເປັນບໍລິສັດຂອງຄົນໄທທີ່ຊ່ຽວຊານໃນເວັບມືຖື ແລະ ທຸລະກິດດ້ານ Mobile Content ແລະ ທ່ານຍັງເປັນຄະນະອໍານວຍການໂທລະຄົມທີ Gerson Lehrman.

---



ລາຊ໌ ພິເດີເຊັນ (Lars Pedersen Borby)
ຜູ້ຮ່ວມກໍ່ຕັ້ງ ແລະ ຄະນະກໍາມະການ ບໍລິສັດ ແອັກວາຍຊ໌ ມີຖື ຈໍາກັດ
ທ່ານ ລາຊ໌ ພິເດີເຊັນ Lars ເປັນຄະນະກໍາມະການທີ່ຊໍານານເລື່ອງການຈັດການທຸລະກິດການຕະຫລາດ ແລະ ທັກສະການເຮັດວຽກເປັນທີມ.

**ຈຸດພິເສດ:**

ມີການວາງແຜນທາງການເງິນ, ການແກ້ໄຂບັນຫາແລະການດໍາເນີນການ, ມີປະສົບການໃນການເຈລະຈາແລການຮ່ວມມືລະຫວ່າງປະເທດ, ການວາງແຜນໂຄງການທຸລະກິດ. ລາຊ໌ ພິເດີເຊັນ Lars ອາໄສຢູ່ໃນເດັນມາກແລະຈະດໍາເນີນສໍານັກງານສະແກນດີເນວຽນຂອງແອັກວາຍຊ໌ມີຖື (ທີ່ສ້າງຕັ້ງຂຶ້ນໃນ 2011/12).

---



ທ່ານ ສະນິດ ຊາພັກດີ
ເປັນຄະນະກໍາມະການທີ່ປຶກສາພິເສດຂອງບໍລິສັດແອັກວາຍຊ໌ມີຖື

ເຮົາມີຄວາມພູມໃຈທີ່ທ່ານ ສະນິດ ຊາພັກດີ ໄດ້ຕົກລົງຊ່ວຍເຫລືອ ແອັກວາຍຊ໌ມີຖື ໃນຫລາຍໆດ້ານລວມທັງດ້ານກົດໝາຍ, ດ້ານການພັດທະນາເທັກໂນໂລຊີ, ດ້ານນະໂຍບາຍ ແລະ ການເຜີຍແຜ່ປະຊາສໍາພັນ.

ທ່ານ ສະນິດ ຊາພັກດີ ເປັນຄົນທີ່ມີປະສົບການຄວາມຮູ້ຄວາມສາມາດທີ່ແທ້ຈິງສໍາລັບການໂທລະຄົມລາວ ທ່ານບໍ່ພຽງແຕ່ສົ່ງເສີມບໍລິສັດ ແອັກວາຍຊ໌ມີຖື ເທົ່ານັ້ນແຕ່ຍັງລວມເຖິງພາກອຸດສະຫະກໍາການໂທລະຄົມຂອງປະເທດລາວໂດຍລວມອີກດ້ວຍ ທ່ານ ສະນິດ ຊາພັກດີ ຍັງເປັນຫົວໜ້າກົມແຜນການ ແລະ ການຮ່ວມມື ອົງການ ໄປສະນີ ແລະ ໂທລະຄົມ ໃນປະເທດລາວດ້ວຍ.

## ລູກຄ້າ

- ບໍລິສັດບໍລິການ ມືຖື ແລະ ບໍລິການ MVNO ໃນ: ລາວ, ກໍາປູເຈຍ, ຫວຽດນາມ ແລະ ໄທ.
- ຮ້ານຄ້າຍ່ອຍ: ລາວ, ກໍາປູເຈຍ, ຫວຽດນາມ, ໄທ, ອິນໂດນີເຊຍ ແລະ ເດັນມາກ.
- ລັດຖະບານ ແລະ ເອັນຈີໂອ.
- ຍີ່ຫໍ້ໃນຊຸມຊົນ: ບໍ່ແມ່ນອາຫານ, ປ້າຍບັນທຶກ ແລະ ຜູ້ໃຫ້ບໍລິການເນື້ອຫາ.

## ການກໍານົດລາຄາ ແລະ ຈໍານວນສັ່ງເຄື່ອງຂັ້ນຕໍ່າ (MOQ-Minimum Order Quantity)

- ປະລິມານການສັ່ງຊື້ຂັ້ນຕໍ່າຂຶ້ນຢູ່ກັບລາຍລະອຽດຂອງອຸປະກອນ ແຕ່ຈະກ່າວເຖິງໃນລາຍລະອຽດທີ່ເຮົາສົ່ງສະເປກເຄື່ອງໃຫ້ທ່ານ,
- ລາຄາຖືກກໍານົດຈາກປະລິມານການສັ່ງຊື້ ແລະ ຂໍ້ກໍານົດສະເປກເຄື່ອງ.
- ຂໍ້ຕົກລົງມາດຕະຖານທີ່ມີການຝາກເງິນຕາມການສັ່ງຊື້.
- ຮູບແບບ ແລະ ກາຂອງສິນຄ້າ: ສັນຍາລັກຂອງລູກຄ້າ/ຍີ່ຫໍ້ອຸປະກອນອື່ນໆເຊັ່ນ: ຊື່ຂອງຕົນເອງ, ຖ້າທ່ານຕ້ອງການທີ່ຈະສົ່ງເສີມແພັກເກດພິເສດຫລືຊຸມຊົນຂອງທ່ານເອງ. ໝາຍເຫດ: ພວກເຮົາບໍ່ໄດ້ສ້າງຊື່ເຊັ່ນ Nokia, BlackBerry, iPhone ແລະ ອື່ນໆ
- ການຈັດສົ່ງສິນຄ້າ: ລູກຄ້າສາມາດທໍາການຂົນສົ່ງເອງ ຫລື ໃຫ້ທາງບໍລິສັດບໍລິການຈັດສົ່ງຈາກສາຍການຜະລິດເຂົ້າກັບທາງເຮືອຫລືທາງຍົນທີ່ໃກ້ທີ່ສຸດ.